# ຄູ່ມືການຍົກຍ້າຍ

## <ຂັ້ນຕອນການເຊົ່າເຮືອນ>

[ຄົນຕ່າງປະເທດ]

[ຕົວແທນອະສັງຫາລິມະຊັບ]

ບອກເງື່ອນໄຂຫ້ອງທີ່ຕ້ອງການ

ຄົນຕ່າງຊາດ ຕ້ອງການແລ້ວ, ເອົາເອກະສານຫ້ອງໃຫ້ເບິ່ງ.

ຖ້າມີຫ້ອງທີ່ຖືກໃຈ ຢາກຈະໄປເບິ່ງ

ເບິ່ງຫ້ອງແລ້ວ, ຢາກເຮັດສັນຍາເຊົ່າ ໃຫ້ຂຽນໃບຈັບຈອງ

ກວດກາ

※ຜູ້ຄໍ້າປະກັນຮ່ວມ
※ລະບົບບໍລິຫານຮັບປະກັນ
※ບໍລິສັດຮັບປະກັນ

ຕັດສິນ

ດໍາເນີນການຕາມສັນຍາ

※ບາງເທື່ອໄດ້ວາງເງິນມັດຈໍາໄວ້ກໍມີ

ອະທິບາຍຄວາມສໍາຄັນຂອງສັນຍາ

ໄດ້ຮັບເງິນທີ່ຈໍາເປັນເຊັ່ນ: ເງິນມັດຈໍາ, ເງິນຂອບໃຈ, ຄ່າຟີໂດ-ຊັງເຮັດເອກະສານ, ເງິນປະກັນໄພຄວາມເສັຍຫາຍ, ເງິນຄ່າເຊົ່າ ແລະ ອື່ນໆ, ແລ້ວເຊັນສັນຍາ.

ຮັບກະແຈແລ້ວ,ເຂົ້າຢູ່ເຮືອນ

ຄໍາເຕືອນ : ຢູ່ປະເທດຍີ່ປຸ່ນ, ມີເຮືອນບາງຫຼັງ ທີ່ ເປັນຂອງ ຮ້ານຟີໂດ-ຊັ່ງ ເພື່ອລໍຖ້າຂາຍ, ເຮືອນສ່ວນຫຼາຍ ເປັນຂອງບຸກຄົນທໍາມະດາ. ເວລາມີຄົນຢາກຊື້ ຢາກເຊົ່າ ຮ້ານຟີໂດ-ຊັ່ງ ຈະເປັນຄົນກາງ ອະທິບາຍ ເວົ້າລົມ ແລະ ເປັນຜູ້ດໍາເນີນການໃຫ້.

# ກົດລະບຽບຂອງການຍ້າຍເຮືອນ 住宅の引越ルール(ラオス語版)

ເວລາຈະຍ້າຍເຮືອນ, ຕ້ອງໄດ້ຕິດຕໍ່ຫາໂຮງການເມືອງ, ກົມໄຟຟ້າ, ບ່ອນກ່ຽວຂ້ອງອື່ນໆ ແລະ ໃຫ້ຕິດຕໍ່ຫາເຈົ້າຂອງເຮືອນ ຫລື ຮ້ານ (ຟືໂດຊັ່ງ) ແລ້ວ ຈຶ່ງຈັດແຈງມ້ຽນເຄື່ອງ.

## [ກ່ອນຈະຍ້າຍ] [引越(ひっこし)の前(まえ)]

1 ໃຫ້ໄປຫາ (ເຈົ້າຂອງເຮືອນ) ຫລືໄປຮ້ານ (ຟືໂດຊັ່ງ)
ເພື່ອກວດເບິ່ງໃບສັນຍາເຊົ່າເຮືອນ, ແລ້ວ ຄອບຍົກເລີກສັນຍາເຊົ່າ.

2 ຕິດຕໍ່ຫາ ໄຟຟ້າ . ແກັສ . ນ້ຳປະປາ . ຄອບຈະເຊົາໃຊ້, ແລະໃຫ້ໄປແຈ້ງການຍົກຍ້າຍທີ່ໂຮງການເມືອງດ້ວຍ.

ໄປບໍລິສັດ ນ້ຳປະປາ , ໄຟຟ້າ , ແກັສ , ເພື່ອຄິດຄ່າຄ້າງຄາຕ່າງໆ, ແລະຖອນໃບສັນຍາ.

| | |
|---|---|
| ນ້ຳ ປະ ປາ | ໄປແຈ້ງຫ້ອງການ ນ້ຳປະປະ ທີ່ ໃກ້ເຮືອນ. |
| ໄຟ ຟ້າ | ໄປແຈ້ງກົມໄຟຟ້າ ຫລື ສາຂາ ທີ່ ໃກ້ເຮືອນ. |
| ແກັສ | ■ແກັສ ທໍ່ ໃຫ້ໄປບໍລິສັດ ໂຕກຽວ ແກັສ ທີ່ ໃກ້ເຮືອນ.<br>■ແກັສ ບັ້ງ ໃຫ້ໄປຮ້ານຂາຍແກັສ ທີ່ ໃກ້ເຮືອນ. |



ເອົາທີ່ຢູ່ໃໝ່, ເບີໂທ, ຊື່ບໍລິສັດ, ເບີໂທບໍລິສັດ ໄປແຈ້ງ ທີ່ ຫ້ອງການໄປສະນີ.

| | |
|---|---|
| ໂທລະສັບ | ໄປແຈ້ງບໍລິສັດNTT ທີ່ໃກ້ເຮືອນ. |
| ໄປ ສະ ນີ | ໄປຫ້ອງການໄປສະນີ ທີ່ໃກ້ບ້ານ. |

ເວລາຍົກຍ້າຍຈະຖິ້ມ (ສິ່ງຂອງໃຫ່ຍໆ ) ໃຫ້ຈ້າງໂຮງການເມືອງ ມາ ເອົາ.

| | |
|---|---|
| ຂີ້ ເຫຍື້ອ | ໄປແຈ້ງ ໂຮງການເມືອງ. |

---

## [ມື້ຍ້າຍອອກ] [引越(ひっこし)の時(とき)]

1 ຂົນເຄື່ອງອອກໃຫ້ໝົດ . ປັດກວດຫ້ອງໃຫ້ກ້ຽງໆ

➡ ຂົນເຄື່ອງອອກໃຫ້ໝົດ, ປັດກວດຫ້ອງໃຫ້ກ້ຽງໆ.
ຂີ້ເຫຍື້ອ ປະໄວ້ບໍ່ໄດ້ເດັດຂາດ.

2
- ກວດກາເບິ່ງທຸກໆຫ້ອງໃຫ້ລຽບລ້ອຍ
- ແລ້ວ ເອົາກະແຈໄປສົ່ງ.
- ຄິດໄລ່ເອົາເງິນຄ່າປະກັນແລະອື່ນໆຄືນ.

➡ ສິ່ງທີ່ກ່າວມາຂ້າງເທິງນີ້, ສຳຄັນທີ່ສຸດໃຫ້ບອກເຈົ້າຂອງເຮືອນຫລື ບອກຮ້ານ (ຟືໂດຊັ່ງ) ແທ້ໆ. ແລະໃຫ້ນັບຖືກົດລະບຽບຢູ່ໃນໃບສັນຍາເຊົ່າເຮືອນນັ້ນໃຫ້ດີດ້ວຍ.

◆ ຫລັງຈາກຍ້າຍແລ້ວໆ, ພາຍໃນ 14 ມື້, ໃຫ້ໄປແຈ້ງທີ່ຢູ່ໃໝ່ ທີ່ໂຮງການເມືອງ.

## ◆ບັນທຶກບ່ອນຈະໄປຕິດຕໍ່　◆連絡先メモ

| | | |
|---|---|---|
|  | ບໍລິສັດຈັດສັນບ້ານເຊົ່າ,<br>ຫລື ເຈົ້າຂອງເຮືອນ<br>不動産店または家主(大家) | ຊື່ບໍລິສັດ<br>ຊື່ເຈົ້າຂອງເຮືອນ<br>ເບີໂທ :　　　(　　　) |
|  | ນ້ຳ ປະ ປາ<br>水 道 | ຫ້ອງການ　　　　ສາຂາ<br>ຫລື ເມືອງ　　　　ພະແໜກ.<br>ເບີໂທ :　　　(　　　) |
|  | ໄຟ ຟ້າ<br>電 気 | ກົມໄຟຟ້າໂຕກຽວ　　　　ສາຂາ<br>ເບີໂທ :　　　(　　　) |
|  | ແ ກ໊ ສ<br>ガ ス | ໂຕກຽວ ແກ໊ສ　　　　ສາຂາ<br>ຮ້ານແກ໊ສບົ້ງ LPG (　　　)<br>ເບີໂທ :　　　(　　　) |
|  | ໂທ ລະ ສັບ<br>電 話 | NTT　　　　ສາຂາ<br>ຫລື ຊື່ ບໍລິສັດໂທລະສັບ (　　　)<br>ເບີໂທ :　　　(　　　) |
|  | ໄປ ສະ ນີ<br>郵 便 | ຫ້ອງການໄປສະນີ<br>ເບີໂທ :　　　(　　　) |
|  | ຂີ້ ເຫຍື້ອ<br>ゴ ミ | ເມືອງ　　　　ພະແໜກ.<br>ເບີໂທ :　　　(　　　) |

* ຜູ້ຮັບຜິດຊອບຫ້າງຮ້ານຫລືສາຂາ, ແລະເບີໂທຫລືອື່ນໆ ເມື່ອເຂົ້າເຮືອນບ່ອນໃໝ່ອາດມີການປ່ຽນແປງ, ສະນັ້ນໃຫ້ລະມັດລະວັງດ້ວຍ.


◆ ບ່ອນຕິດຕໍ່ : (ສູນກາງ ຮັ້ມຊູ ບ່ອນອາໃສ ແກ່ຄົນຕ່າງດ້າວ ທີ່ ຄານາກາວາ)

ທີ່ຢູ່ : 〒231-8458 YOKOHAMA-SHI NAKA-KU TOKIWA-CHO 1-7

ເບີໂທ : 045 - 228 -1752 ( ວັ , ນັພດີ . ວັນທດ ພກ )

# ຄຳສັບໃຊ້ເວລາຈະເຊົ່າເຮືອນ　へやを 借りる ときの ことば

ຫ້ອງການຈັດສັນບ້ານເຊົ່າ→ເປັນບ່ອນ ຊື້ຂາຍ, ປ່ຽນ, ໃຫ້ເຊົ່າ, ຖ້າຈະເຊົ່າ ເຂົ້າໄປຢູ່ ຕ້ອງໄດ້ເຮັດສັນຍາເຊົ່າກັບ ຫ້ອງການຄຸ້ມຄອງເຮືອນ.

ຄ່າເຊົ່າ →ເງິນຄ່າເຊົ່າ, ທຸກໆເດືອນຕ້ອງຈ່າຍ, ຖ້າເຊົ່າກາງເດືອນ ຈະຄິດໄລ່ເປັນມື້.
ຄ່າສ່ວນລວມ (ຄ່າຄຸ້ມຄອງ)→ຄັນໃດ ລະບຽງ ເປັນບ່ອນໃຊ້ນຳກັນ, ຄ່າໄຟຟ້າ ຕ້ອງຈ່າຍຕ່າງຫາກ.
ຄ່າບ່ອນຈອດລົດ→ ບ່ອນຈອດລົດຂອງໂຕເອງ ທຸກໆເດືອນຕ້ອງຈ່າຍ, ບໍ່ກ່ຽວກັບຄ່າເຊົ່າເຮືອນ.
ເງິນມັດຈຳ→ເງິນຈຳນວນນີ້, ເວລາເຮັດສັນຍາເຊົ່າ ເຈົ້າຂອງເຮືອນຈະບົ່ງເອົາຈຳນວນ 1 ຫາ 3 ເດືອນຂອງຄ່າເຊົ່າເຮືອນ. ເວລາຈ່າຍຄ່າເຮືອນບໍ່ໄດ້ ຫຼື ເວລາຍ້າຍອອກ ໄດ້ສ້ອມແປງເຮືອນບ່ອນເພພັງ, ເອົາເງິນມັດຈຳຈ່າຍແລ້ວ, ຖ້າເງິນຍັງເຫຼືອຈະສົ່ງຄືນ.

ເງິນຂອບໃຈ→ເວລາເຊັນສັນຍາເຊົ່າເຮືອນ ຕ້ອງຈ່າຍໃຫ້ເຈົ້າຂອງເຮືອນ, ປະມານ 1 ຫາ 2 ເດືອນຂອງຄ່າເຊົ່າເຮືອນ. ສ່ວນຫຼວງຫຼາຍຈະບໍ່ສົ່ງຄືນ.

ຄ່ານາຍໜ້າ→ເງິນຄ່າເຮັດເອກະສານຂອງຫ້ອງການຈັດສັນບ້ານເຊົ່າ, ຈຳນວນ 1 ເດືອນຂອງຄ່າເຊົ່າເຮືອນ.
ຄ່າປະກັນໄພຄວາມເສັຍຫາຍ→ເວລາເຊັນສັນຍາ ຢ້ານເຄື່ອງເຮືອນເພພັງ, ຖ້າເຂົ້າປະກັນໄພຕ້ອງໄດ້ຈ່າຍ.
ຄ່າຕໍ່ສັນຍາເຊົ່າ→ຊ່ວງເຊົ່າເຮືອນມີກຳນົດ 2 ປີ. ຖ້າຈະຢູ່ຕໍ່ໄປຕ້ອງຕໍ່ສັນຍາ ແລະຕ້ອງໄດ້ຈ່າຍຄ່າທຳນຽມ. ແຕ່ວ່າ ບາງບ່ອນບໍ່ເອົາຄ່າທຳນຽມກໍມີ.

ຜູ້ປະກັນ→○ຜູ້ຄ້ຳປະກັນ→ເມື່ອຜູ້ຢູ່ຈ່າຍຄ່າເຊົ່າເຮືອນບໍ່ໄດ້ ຫຼື ຈ່າຍຄ່າສ້ອມແປງເຮືອນບໍ່ໄດ້ ຜູ້ຄ້ຳປະກັນຕ້ອງເປັນຜູ້ຈ່າຍ. ຜູ້ຄ້ຳປະກັນຕ້ອງໃຫ້ມີລາຍໄດ້.

○ລະບົບບໍລິຫານການຮັບປະກັນ,
-ຜູ້ຈະເຊົ່າເຮືອນຢູ່ໃນເມືອງ ກະວາຊະກິ ຕ້ອງການລະບົບນີ້, ເປັນຜູ້ຮັບປະກັນໃຫ້ນັ້ນ, (ມີສິດໃຊ້ໄດ້) ສອບຖາມ ທີ່ ໂຮງການເມືອງ ກະວາຊະກິ ພະແນກ ຄຸ້ມຄອງເຮືອນ ຫຼື ສອບຖາມນຳ ອົງການ ຄານາກະວ່າ ກາຍກົກກຶຢືງ ສີມ່າຍ ຊັບປອດ ແຊນຕ້າ.

○ບໍລິສັດຄ້ຳປະກັນຂອງເອກະຊົນ→ບໍລິສັດຄ້ຳປະກັນແທນຜູ້ຄ້ຳປະກັນຮ່ວມ. ຫາກຕ້ອງການໃຊ້ຈະໄດ້ເສັຍເງິນ ແລະ ຕ້ອງໃຫ້ມີເບີໂທລະສັບຕິດຕໍ່ເວລາກະທັນຫັນ. ລາຍລະອຽດຖາມຫ້ອງການຈັດສັນບ້ານເຊົ່າ.

ສັນຍາເຊົ່າເຮືອນເຮືອນແບບທຳມະດາ→ສັນຍາປົກກະຕິ. ຖ້າວ່າ ບໍ່ມີເຫດຜົນຫຍັງຂັດຂ້ອງກັນແລ້ວ,
(ສັນຍາເຊົ່າອາຄານມາດຕະຖານ) ເຈົ້າຂອງເຮືອນກໍຈະບໍ່ປະຕິເສດການຕໍ່ສັນຍາ. ເວລາຊ່ວງສັນຍາໝົດອາຍຸແລ້ວ, ວິທີການຕໍ່ສັນຍາເຊົ່າເຮືອນ,ໃຫ້ປະຕິບັດຕາມເນື້ອໃນທີ່ໄດ້ບົ່ງໄວ້.

ສັນຍາເຊົ່າເຮືອນໄລຍະຍາວ→ເມື່ອໝົດສັນຍາເຊົ່າ, ຈະບໍ່ໃຫ້ເຊົ່າອີກ. ຖືວ່າ ໝົດສັນຍາເຊົ່າກັນເລີຍ. ຖ້າຈະຕໍ່ສັນຍາເຊົ່າແບບທຳມະດາ ຫຼື ຕໍ່ສັນຍາເຊົ່າແບບຍາວນານ,ໃຫ້ກວດກາເບິ່ງດີໆ.
ບໍລິສັດຄຸ້ມຄອງ→ເຄື່ອງໃຊ້ຢູ່ໃນເຮືອນເຊົ່າຕິດຂັດ ໃຫ້ປຶກສານຳ ບໍລິສັດຄຸ້ມຄອງເຮືອນ.